ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 103 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 46/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 04/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

**ທອງລຸນ ສີສຸລິດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 46 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງ
# ອາວຸດ ແລະ ວັດຖຸລະເບີດ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃນວາລະຂອງກອງປະຊຸມ ຄັ້ງວັນທີ 27 ມິຖຸນາ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນເຊົ້າຂອງວັນທີ 7 ກໍລະກົດ 2022.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ | ເລກທີ 14 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍ
# ວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ຕິດຕາມ ກວດກາ ວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃນທົ່ວສັງຄົມ ເພື່ອໃຫ້ວຽກງານດັ່ງກ່າວ ປະຕິບັດໄດ້ຢ່າງ ຖືກຕ້ອງ, ເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ປະເທດຊາດ ມີສະຖຽນລະ ພາບທາງດ້ານການເມືອງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ແມ່ນ ການຄວບຄຸມ, ຕິດຕາມ, ກວດກາ ການ ປະດິດ, ດັດ ແປງ, ຜະລິດ, ຈໍາໜ່າຍ, ຈັດຊື້, ນໍາເຂົ້າ, ສົ່ງອອກ, ຂົນສົ່ງ, ນໍາຜ່ານ, ນໍາໃຊ້, ປົກປັກຮັກສາ, ທໍາລາຍ ຫຼື ມີໄວ້ ໃນຄອບຄອງ ອາວຸດ ແລະ ວັດຖຸລະເບີດ ເພື່ອຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພຂອງສັງຄົມ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອາວຸດ** ໝາຍເຖິງ ອຸປະກອນ, ເຄື່ອງມື, ພາຫະນະ ຫຼື ລະບົບພາຫະນະ ທີ່ສ້າງຂຶ້ນ ຫຼື ນໍາໃຊ້ ໃນ ການປ້ອງກັນ, ຕໍ່ສູ້, ທໍາຮ້າຍ ຫຼື ທໍາລາຍ, ຝຶກຊ້ອມ, ແຂ່ງຂັນກິລາ ເຊັ່ນ ອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ;

2. **ວັດຖຸລະເບີດ** ໝາຍເຖິງ ຜະລິດຕະພັນທີ່ຜະລິດຈາກ ທາດລະເບີດ, ເຄມີຜະລິດລະເບີດ, ອຸປະ ກອນກໍ່ລະເບີດ ຊຶ່ງກໍ່ໃຫ້ເກີດປະຕິກິລິຍາເຄມີຢ່າງວ່ອງໄວ, ແຮງດັນ, ພະລັງງານຄວາມຮ້ອນ, ອາຍແກັດ, ລັງສີ, ຄື້ນ, ແສງ ທີ່ເຮັດໃຫ້ເກີດສຽງລະເບີດ ເປັນຕົ້ນ ລູກລະເບີດ ແລະ ດອກໄມ້ໄຟ;

3. **ທາດລະເບີດ** ໝາຍເຖິງ ທາດເຄມີດ່ຽວ ຫຼື ທາດເຄມີປະສົມ ທີ່ກໍ່ໃຫ້ເກີດປະຕິກິລິຍາການລະເບີດ ໄດ້ດ້ວຍການກະຕຸ້ນທາງກົນລະສາດ, ຄວາມຮ້ອນ, ເຄມີ ຫຼື ໄຟຟ້າ ແລະ ອື່ນໆ;

4. **ເຄມີຜະລິດລະເບີດ** ໝາຍເຖິງ ເຄມີ ທີ່ຖືກນຳໃຊ້ເຂົ້າໃນການຜະລິດວັດຖຸລະເບີດ;

5. **ອຸປະກອນກໍ່ລະເບີດ** ໝາຍເຖິງ ເຄື່ອງຈຸດລະເບີດ, ສາຍຂະນວນ, ສາຍແຕກ, ແກັບ, ບໍ່ກຳເນີດໄຟ ຫຼື ສິ່ງອື່ນ ທີ່ມີຜົນກະທົບໃນການສ້າງແຮງກະຕຸ້ນເຮັດໃຫ້ລະເບີດ;

6. **ດອກໄມ້ໄຟ** ໝາຍເຖິງ ວັດຖຸ ທີ່ສາມາດໄໝ້ລະເບີດ ດ້ວຍການນຳເອົາໝື້ ມາຫໍ່ດ້ວຍເຈ້ຍ ຫຼື ຢັດ ອັດໃສ່ບັ້ງ ຫຼື ຫຸ້ມຫໍ່ດ້ວຍວັດຖຸອື່ນ ທີ່ຈູດຂະນວນດ້ວຍໄຟ ຫຼື ລະບົບໄຟຟ້າ ທີ່ກໍ່ໃຫ້ມີສຽງແຕກ ຫຼື ລະເບີດ ຫຼື ພຸ່ງລຳແສງເປັນໄຟ ມີສຽງແຕກເທິງອາກາດ ເປັນຕົ້ນ ບັ້ງໄຟ, ບັ້ງໄຟດອກ ແລະ ໝາກກະໂພກ;

7. **ເຄື່ອງມືຊ່ວຍໜູນ** ໝາຍເຖິງ ອຸປະກອນ ແລະ ສັດວິຊາສະເພາະ ທີ່ນຳໃຊ້ຊ່ວຍໜູນເຂົ້າໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊັ່ນ ປືນໄຟຟ້າ, ອາຍແກັສ, ຢາສະຫຼົບ, ຕາໜ່າງ, ລູກກະສູນຢາງ, ແກັສນ້ຳຕາ, ດອກໄມ້ໄຟສັນຍານ, ລະເບີດຄວັນ, ລະເບີດນ້ຳຕາ, ຄ້ອນໄຟຟ້າ, ຄ້ອນຢາງ, ຄ້ອນເຫຼັກ, ກະແຈມື, ເຄື່ອງວາງຕະປູ ຫຼື ເຄື່ອງສະກັດຢາງຕີນລົດ, ເສື້ອເກາະກັນກະສຸນ, ຖົງມືກັນມີດ, ໂລ່ກັນ, ໝວກກັນກະທົບ, ກັນລູກກະສູນ, ຊ້າງ, ມ້າ, ໝາ ແລະ ເຄື່ອງມືອື່ນ;

8. **ກຳລັງປ້ອງກັນຕົວ** ໝາຍເຖິງ ພະນັກງານ, ກຳມະກອນ, ນັກສຶກສາ ທີ່ໄດ້ຮັບການປະກອບອາວຸດ ຊຶ່ງຈັດຕັ້ງຂຶ້ນຢູ່ຕາມ ສຳນັກງານ ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກ, ໂຮງງານ ແລະ ສາງຄັງ ທີ່ເປັນຂອງລັດ ເຮັດໜ້າທີ່ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຂອບເຂດທີ່ຕັ້ງຂອງຕົນ;

9. **ກຳລັງປ້ອງກັນຕົວ ສຳນັກງານ ອົງການ** ໝາຍເຖິງ ພະນັກງານ, ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ເຮັດໜ້າທີ່ປ້ອງກັນ ຢູ່ ສຳນັກງານ ອົງການ, ເປັນກຳລັງເຄິ່ງອາຊີບ ທີ່ຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ;

10. **ກຳລັງປ້ອງກັນພາຍໃນ** ໝາຍເຖິງ ພະນັກງານ ທີ່ໄດ້ຮັບການມອບໝາຍໃຫ້ເຮັດໜ້າທີ່ປ້ອງກັນຢູ່ບັນດາກະຊວງ, ສຳນັກງານ ອົງການ, ໂຮງງານ, ກິດຈະການອື່ນ ທີ່ຂຶ້ນກັບການຊີ້ນຳຂອງຄະນະນຳຢູ່ຂັ້ນນັ້ນ ແລະ ຄະນະນຳຂອງຂະແໜງການປ້ອງກັນຄວາມສະຫງົບ, ສຳລັບວຽກງານວິຊາສະເພາະນັ້ນ ແມ່ນຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ;

11. **ກຳລັງຮັກສາຄວາມປອດໄພ** ໝາຍເຖິງ ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ, ມີເຄື່ອງແບບ ແລະ ເຄື່ອງໝາຍສະເພາະ ເຮັດໜ້າທີ່ໃນການປ້ອງກັນ, ເວນຍາມຢູ່ ສຳນັກງານ ອົງການ, ໂຮງຈັກ, ໂຮງງານ, ໂຮງໝໍ, ໂຮງຮຽນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງສາກົນ, ສະຖານທູດ, ສະຖານກົງສຸນ, ເຮືອນພັກຂອງຄົນຕ່າງປະເທດ ແລະ ພົນລະເມືອງລາວ ຊຶ່ງໄດ້ຮັບການສ້າງຕັ້ງ, ຍຸບເລີກ ແລະ ຢູ່ໃນການຄຸ້ມຄອງ, ຊີ້ນຳຂອງກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ລັດ ຊຸກຍູ້ ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຢູ່ ສປປ ລາວ ດ້ວຍການພັດທະນາໂຄງລ່າງພື້ນຖານ ໃຫ້ເປັນລະບົບຄົບຊຸດ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ ແລະ ເຕັກໂນໂລຊີທີ່ທັນສະໄໝ ໃຫ້ແກ່ກຳລັງປະກອບອາວຸດ.

ລັດ ເອົາໃຈໃສ່ໃນການ ໂຄສະນາ ເຜີຍແຜ່ ສ້າງຈິດສຳນຶກໃຫ້ສັງຄົມຮັບຮູ້, ເຂົ້າໃຈ ເຖິງຄຸນປະໂຫຍດ, ຄວາມເປັນອັນຕະລາຍຂອງ ອາວຸດ ແລະ ວັດຖຸລະເບີດ, ຈຳກັດ, ຫຼຸດຜ່ອນຜົນກະທົບ ຕໍ່ ຊີວິດ, ສຸຂະພາບ, ຂອງ ຄົນ, ສັດ, ພືດ, ຊັບສິນ ແລະ ສິ່ງແວດລ້ອມ.

ມາດຕາ 5 ຫຼັກການ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

ວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

2. ຄຸ້ມຄອງ ຕິດຕາມ ກວດກາ ໂດຍກົງຂອງ ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຢ່າງລວມສູນ, ເປັນເອກະພາບ ແລະ ເຂັ້ມງວດ ໃນຂອບເຂດທົ່ວປະເທດ;

3. ປະສານສົມທົບ ຢ່າງກົມກຽວລະຫວ່າງ ກຳລັງປ້ອງກັນຊາດ, ກຳລັງປ້ອງກັນຄວາມສະຫງົບ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ;

4. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຢູ່ ສປປ ລາວ.

ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຄົ້ນຄວ້າທາງດ້ານວິທະຍາສາດ, ການສຶກສາ, ການສ້າງ, ບຳລຸງຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝ ບົນພື້ນຖານຫຼັກການເຄົາລົບ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງກິດຈະການພາຍໃນ ຊຶ່ງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II

## ການຄຸ້ມຄອງອາວຸດ

### ໝວດທີ 1

### ປະເພດອາວຸດ

ມາດຕາ 8 ປະເພດອາວຸດ

ປະເພດອາວຸດ ມີ ດັ່ງນີ້:

1. ອາວຸດເສິກ;
2. ອາວຸດກິລາ;
3. ອາວຸດພື້ນເມືອງ.

ມາດຕາ 9 ອາວຸດເສິກ

ອາວຸດເສິກ ແມ່ນ ປືນ, ລູກກະສຸນ, ລູກລະເບີດ, ພາຫະນະ ຫຼື ລະບົບພາຫະນະ ແລະ ອາວຸດເສິກ ທຸກຊະນິດ ເປັນຕົ້ນ ປືນສັ້ນ, ປືນເຫຼັກຍາວ, ປືນກົນ, ປືນຄົກ, ປືນໃຫຍ່, ລູກສອນໄຟ, ຣາດາ, ລົດສູ້ຮົບ, ເຮືອບິນສູ້ຮົບ, ເຮືອບິນບໍ່ມີຄົນຂັບ ແລະ ເຮືອສູ້ຮົບ.

ມາດຕາ 10 ອາວຸດກິລາ

ອາວຸດກິລາ ແມ່ນ ປືນອັດລົມ, ປືນແວ່ງ ສັ້ນ-ຍາວ, ປືນສັ້ນ, ປືນເຫຼັກຍາວ, ປືນລູກຊອງ ແລະ ລູກກະສຸນ ທີ່ມີ ຂະໜາດ, ຄວາມແຮງ ແລະ ດາບ, ທະນູ, ໜ້າເກັ້ງ, ຫຼາວ ແລະ ອາວຸດກິລາອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

ມາດຕາ 11 ອາວຸດພື້ນເມືອງ

ອາວຸດພື້ນເມືອງ ແມ່ນ ປືນແກັບ, ປືນເພີງ, ປືນປະດິດ, ປືນດັດແປງ, ມີດແຫຼມ, ງ້າວ, ດາບ, ຫອກ, ພ້າ, ຂວານ, ໜ້າເກັ້ງ, ທະນູ, ຜຸເປົ່າລູກດອກ, ເລື່ອຍ, ສະນັບມື, ແຫຼມມື, ແຮ້ວ, ກັບດັກ, ຂວາກ, ຮ່າວ ແລະ ອາວຸດພື້ນເມືອງອື່ນ.

## ໝວດທີ 2
## ການຄຸ້ມຄອງອາວຸດເສິກ

ມາດຕາ 12 ການຄຸ້ມຄອງອາວຸດເສິກໃນກຳລັງປ້ອງກັນຊາດ

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງອາວຸດເສິກ ໃນຂົງເຂດວຽກງານປ້ອງກັນຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ ກ່ຽວກັບການ ຄົ້ນຄວ້າ ປະດິດ, ຜະລິດ, ສ້ອມແປງ, ປົກປັກຮັກສາ, ຈຳໜ່າຍ, ຈັດຊື້, ນຳເຂົ້າ, ສົ່ງອອກ, ກວດພິສູດ, ປະກອບ, ອະນຸຍາດ, ນຳໃຊ້ ແລະ ທຳລາຍ ອາວຸດເສິກ ລວມທັງ ຍຸດໂທປະກອນເຕັກນິກການທະຫານ ແລະ ເຄື່ອງມືຊ່ວຍໜູນ ໃນກຳລັງຂອງຕົນ ຢ່າງເຂັ້ມງວດ.

ມາດຕາ 13 ການຄຸ້ມຄອງອາວຸດເສິກ ໃນກຳລັງປ້ອງກັນຄວາມສະຫງົບ

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດເສິກ ໃນຂົງເຂດວຽກງານປ້ອງກັນຄວາມສະຫງົບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ ກ່ຽວກັບການຄົ້ນຄວ້າ ປະດິດ, ຜະລິດ, ສ້ອມແປງ, ປົກປັກຮັກສາ, ຈຳໜ່າຍ, ຈັດຊື້, ນຳເຂົ້າ, ສົ່ງອອກ, ກວດພິສູດ, ປະກອບ, ອະນຸຍາດ, ນຳໃຊ້ ແລະ ທຳລາຍ ອາວຸດເສິກ ລວມທັງ ຍຸດໂທປະກອນເຕັກນິກ ແລະ ເຄື່ອງມືຊ່ວຍໜູນໃນກຳລັງປ້ອງກັນຄວາມສະຫງົບ ຢ່າງເຂັ້ມງວດ.

ມາດຕາ 14 ການຄຸ້ມຄອງອາວຸດເສິກໃນສັງຄົມ

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງອາວຸດເສິກ ທີ່ປະກອບໃຫ້ ກຳລັງປ້ອງກັນຕົວ ແລະ ກຳລັງກອງຫຼອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ຂຶ້ນທະບຽນ, ປະກອບ ຫຼື ອະນຸຍາດ ຖື, ນຳໃຊ້ ແລະ ຖອນອາວຸດເສິກ ຕາມລະບຽບການ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດເສິກ ທີ່ປະກອບໃຫ້ ເຈົ້າໜ້າທີ່ສືບສວນ-ສອບສວນ, ກຳລັງປ້ອງກັນພາຍໃນ ແລະ ກຳລັງປ້ອງກັນຕົວສຳນັກງານ ອົງການ, ກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກຳລັງຮັກສາຄວາມປອດໄພ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການຂຶ້ນທະບຽນ, ປະກອບ ຫຼື ອະນຸຍາດ ຖື, ນຳໃຊ້ ແລະ ຖອນ ອາວຸດເສິກ ຕາມລະບຽບການ.

ມາດຕາ 15 ເປົ້າໝາຍຈະໄດ້ຮັບອະນຸຍາດປະກອບອາວຸດເສິກ

ເປົ້າໝາຍຈະໄດ້ຮັບອະນຸຍາດປະກອບອາວຸດເສິກ ມີ ດັ່ງນີ້:

1. ກຳລັງປ້ອງກັນຊາດ ແລະ ກຳລັງປ້ອງກັນຄວາມສະຫງົບ;

2. ເຈົ້າໜ້າທີ່ສືບສວນ-ສອບສວນ;

3. ກຳລັງປ້ອງກັນພາຍໃນ ແລະ ກຳລັງປ້ອງກັນຕົວ ສຳນັກງານ ອົງການ;

4. ກຳລັງປ້ອງກັນຕົວ ແລະ ກຳລັງກອງຫຼອນ;

5. ກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກຳລັງຮັກສາຄວາມປອດໄພ.

ສຳລັບ ມາດຕະຖານ ແລະ ເງື່ອນໄຂ ຂອງເປົ້າໝາຍຈະໄດ້ຮັບອະນຸຍາດປະກອບອາວຸດເສິກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ການນຳໃຊ້ອາວຸດເສິກ**

ອາວຸດເສິກ ໃຫ້ນຳໃຊ້ເຂົ້າໃນການປົກປັກຮັກສາ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງ ນ່ານນ້ຳ, ນ່ານຟ້າ, ຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປົກປ້ອງ ຊີວິດ, ສຸຂະພາບ, ຊັບສິນ ຂອງ ລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກອບອາວຸດເສິກ**

ຜູ້ໄດ້ຮັບການປະກອບອາວຸດເສິກ ມີຄວາມຮັບຜິດຊອບ ດັ່ງນີ້:

1. ນຳໃຊ້ໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້;
2. ບົວລະບັດຮັກສາຕາມເຕັກນິກ ແລະ ຄຸນນະພາບຂອງອາວຸດ;
3. ປົກປັກຮັກສາອາວຸດເສິກ ແລະ ບັດອະນຸຍາດຖືອາວຸດເສິກ ບໍ່ໃຫ້ຕົກເຮ່ຍເສຍຫາຍ;
4. ສົ່ງອາວຸດ ໃນກໍລະນີທີ່ມີການຖອນຄືນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຈາກການນຳໃຊ້ອາວຸດທີ່ບໍ່ຖືກຕ້ອງຂອງຕົນ.

**ມາດຕາ 18 ການຖອນຄືນ ແລະ ເກັບກູ້ ອາວຸດເສິກ**

ອາວຸດເສິກ ຂອງຜູ້ໄດ້ຮັບການປະກອບ ຈະຖືກຖອນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໄດ້ຮັບອຸດໜູນບຳນານ ຫຼື ບຳເນັດ;
2. ເສຍຊີວິດ;
3. ຖືກລົງວິໄນໄລ່ອອກຈາກກຳລັງປະກອບອາວຸດ;
4. ໄດ້ຮັບການປະກອບອາວຸດເສິກຊົ່ວຄາວ ພາຍຫຼັງປະຕິບັດໜ້າທີ່ສຳເລັດ;
5. ນຳໃຊ້ອາວຸດເສິກບໍ່ຖືກກັບເປົ້າໝາຍ, ດັດແປງສະພາບເຕັກນິກ ແລະ ຕົກເຮ່ຍເສຍຫາຍແຕ່ສາມາດຊອກຄືນໄດ້;
6. ອອກຈາກ ການເປັນເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ກຳລັງອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້.

ອາວຸດເສິກ ທີ່ເສື່ອມຄຸນນະພາບ ຫຼື ບໍ່ສາມາດນຳໃຊ້ໄດ້ ແລະ ອາວຸດເສິກ ທີ່ບໍ່ແມ່ນຂອງເປົ້າໝາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້ ຕ້ອງໄດ້ເກັບກູ້.

**ມາດຕາ 19 ການນຳເອົາອາວຸດເສິກ ເຂົ້າ-ອອກ ສປປ ລາວ**

ການນຳເອົາອາວຸດເສິກ ເຂົ້າ ສປປ ລາວ ຂອງຕ່າງປະເທດ ເພື່ອປ້ອງກັນການນຳ ທີ່ມາເຄື່ອນໄຫວ, ຢ້ຽມຢາມ, ເຮັດວຽກ, ເຂົ້າຮ່ວມກອງປະຊຸມ, ວາງສະແດງ, ຝຶກຊ້ອມ ຫຼື ກິດຈະກຳອື່ນ ຕ້ອງສະເໜີຜ່ານກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ກະຊວງປ້ອງກັນປະເທດ ພິຈາລະນາອະນຸຍາດ ບົນພື້ນຖານການປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ ໃນການກວດກາບັນຊີ ແລະ ອາວຸດເສິກຕົວຈິງ ກ່ອນນຳເຂົ້າ ສປປ

ລາວ. ພາຍຫຼັງປະຕິບັດໜ້າທີ່ສຳເລັດແລ້ວ ຕ້ອງໄດ້ກວດກາເອົາອາວຸດເສິກທີ່ນຳເຂົ້າມານັ້ນ ອອກ ສປປ ລາວ ໃຫ້ຄົບຖ້ວນ ຫຼື ປະຕິບັດຕາມການຕົກລົງຂອງສອງລັດທີ່ກ່ຽວຂ້ອງ.

ການນຳເອົາອາວຸດເສິກ ອອກ ສປປ ລາວ ຂອງເຈົ້າໜ້າທີ່ ເພື່ອປ້ອງກັນການນຳຂອງປະເທດຕົນ ທີ່ໄປເຄື່ອນໄຫວ, ຢ້ຽມຢາມ, ເຮັດວຽກ, ເຂົ້າຮ່ວມກອງປະຊຸມ, ວາງສະແດງ, ຝຶກຊ້ອມ ຫຼື ກິດຈະກຳອື່ນ ຢູ່ ຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດນຳອົງການທີ່ມີສິດອຳນາດຂອງປະເທດທີ່ກ່ຽວຂ້ອງ ໂດຍຜ່ານກະຊວງການຕ່າງປະເທດ ແລະ ປະຕິບັດຕາມກົດໝາຍ ຂອງປະເທດທີ່ກ່ຽວຂ້ອງ ພາຍຫຼັງສຳເລັດ ຕ້ອງນຳກັບຄືນປະເທດ ໃຫ້ຄົບຖ້ວນຕາມຈຳນວນ.

## ໝວດທີ 3
## ການຄຸ້ມຄອງອາວຸດກິລາ

### ມາດຕາ 20 ການຄຸ້ມຄອງອາວຸດກິລາ ຂອງກຳລັງປ້ອງກັນຊາດ

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງອາວຸດກິລາ ຂອງກຳລັງປ້ອງກັນຊາດ ເປັນຕົ້ນ ປືນ, ລູກກະສຸນ ແລະ ອາວຸດກິລາອື່ນ ທີ່ນຳໃຊ້ເຂົ້າໃນການ ຝຶກຊ້ອມ ແລະ ແຂ່ງຂັນ ກິລາ ທາງການທະຫານ ແລະ ກິລາທົ່ວໄປ ໃນລະດັບຊາດ, ພາກພື້ນ ແລະ ສາກົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ນຳເຂົ້າ, ປົກປັກຮັກສາ, ປະກອບ, ອະນຸຍາດນຳໃຊ້ ແລະ ອື່ນໆ ຕາມລະບຽບການ.

### ມາດຕາ 21 ການຄຸ້ມຄອງອາວຸດກິລາ ຂອງກຳລັງປ້ອງກັນຄວາມສະຫງົບ

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດກິລາ ເປັນຕົ້ນ ປືນ, ລູກກະສຸນ ແລະ ອາວຸດກິລາອື່ນ ທີ່ນຳໃຊ້ເຂົ້າໃນການ ຝຶກຊ້ອມ ແລະ ແຂ່ງຂັນ ກິລາ ຂອງກຳລັງປ້ອງກັນຄວາມສະຫງົບ ແລະ ກິລາທົ່ວໄປ ໃນລະດັບຊາດ, ພາກພື້ນ ແລະ ສາກົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ນຳເຂົ້າ, ປົກປັກຮັກສາ, ປະກອບ, ອະນຸຍາດນຳໃຊ້ ແລະ ອື່ນໆ ຕາມລະບຽບການ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດກິລາໃນທົ່ວສັງຄົມ ໂດຍປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ ເພື່ອມອບໃຫ້ສະຫະພັນກິລາຍິງປືນແຫ່ງຊາດ ເປັນຜູ້ຄຸ້ມຄອງການນຳໃຊ້ ຕາມລະບຽບການ.

### ມາດຕາ 22 ການນຳໃຊ້ອາວຸດກິລາ

ອາວຸດກິລາ ໃຫ້ນຳໃຊ້ເຂົ້າໃນການ ຝຶກຊ້ອມ ແລະ ແຂ່ງຂັນ ຕາມກົດລະບຽບຂອງການແຂ່ງຂັນກິລາແຕ່ລະປະເພດ ເປັນຕົ້ນ ກິລາຍິງປືນ, ກິລາຍິງທະນູ ແລະ ກິລາຊັດຫຼາວ. ພາຍຫຼັງສິ້ນສຸດການຝຶກຊ້ອມ ແລະ ແຂ່ງຂັນແລ້ວ ໃຫ້ສົ່ງອາວຸດດັ່ງກ່າວ ຄືນໜ່ວຍງານທີ່ຮັບຜິດຊອບ ເພື່ອເກັບຮັກສາໄວ້.

### ມາດຕາ 23 ການນຳເອົາອາວຸດກິລາ ເຂົ້າ-ອອກ ສປປ ລາວ

ການນຳເອົາອາວຸດກິລາ ເຂົ້າ ສປປ ລາວ ຂອງຕ່າງປະເທດ ເພື່ອເຂົ້າຮ່ວມໃນການ ຝຶກຊ້ອມ ແລະ ແຂ່ງຂັນ, ວາງສະແດງ ຫຼື ກິດຈະກຳອື່ນ ຕ້ອງສະເໜີຜ່ານ ກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ກະຊວງປ້ອງກັນປະເທດ ພິຈາລະນາອະນຸຍາດ ບົນພື້ນຖານປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ ພາຍຫຼັງສຳເລັດແລ້ວ ຕ້ອງໄດ້ກວດກາເອົາອາວຸດກິລາທີ່ນຳເຂົ້ານັ້ນ ອອກ ສປປ ລາວ ໃຫ້ຄົບຖ້ວນ ຫຼື ປະຕິບັດຕາມການຕົກລົງຂອງສອງລັດທີ່ກ່ຽວຂ້ອງ.

ການນຳເອົາອາວຸດກິລາ ອອກ ສປປ ລາວ ເພື່ອເຂົ້າຮ່ວມໃນການ ຝຶກຊ້ອມ ແລະ ແຂ່ງຂັນ, ວາງສະແດງ ຫຼື ກິດຈະກຳອື່ນ ຢູ່ຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດນຳອົງການທີ່ມີສິດອຳນາດຂອງປະເທດທີ່ກ່ຽວ

ຂ້ອງ ໂດຍຜ່ານກະຊວງການຕ່າງປະເທດ ແລະ ປະຕິບັດຕາມກົດໝາຍ ຂອງປະເທດທີ່ກ່ຽວຂ້ອງ ພາຍຫຼັງສຳເລັດຕ້ອງນຳກັບຄືນປະເທດ ໃຫ້ຄົບຖ້ວນຕາມຈຳນວນ.

ສຳລັບ ການນຳເຂົ້າ ປືນກິລາ ແລະ ລູກກະສຸນ ທຸກປະເພດ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນຄວາມສະຫງົບ ຍົກເວັ້ນປືນກິລາທີ່ເປັນອາວຸດເສິກ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ.

## ໝວດທີ 4
## ການຄຸ້ມຄອງອາວຸດພື້ນເມືອງ

**ມາດຕາ 24 ການຄຸ້ມຄອງອາວຸດພື້ນເມືອງ**

ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດພື້ນເມືອງ ເປັນຕົ້ນ ປືນແກ່ບ, ປືນເພີງ, ປືນປະດິດ ແລະ ປືນກົດແປງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ເກັບກູ້ຄືນ, ຂຶ້ນບັນຊີ, ທຳລາຍ, ນຳໃຊ້ ຫຼື ວາງສະແດງ ຕາມລະບຽບການ.

**ມາດຕາ 25 ການນຳໃຊ້ອາວຸດພື້ນເມືອງ**

ອາວຸດພື້ນເມືອງ ໃຫ້ນຳໃຊ້ເຂົ້າໃນການ ປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປ້ອງກັນ ຊີວິດ, ສຸຂະພາບ, ຊັບສິນ ຂອງ ລັດ, ລວມໝູ່ ແລະ ບຸກຄົນ ລວມທັງການນຳໃຊ້ເຂົ້າໃນ ການຜະລິດ, ການດຳລົງຊີວິດປະຈຳວັນ ແລະ ບໍ່ໃຫ້ນຳໃຊ້ໃນການກະທຳທີ່ເປັນການລະເມີດກົດໝາຍ.

# ພາກທີ III
# ການຄຸ້ມຄອງວັດຖຸລະເບີດ
## ໝວດທີ 1
## ປະເພດວັດຖຸລະເບີດ

**ມາດຕາ 26 ປະເພດວັດຖຸລະເບີດ**

ປະເພດວັດຖຸລະເບີດ ມີ ດັ່ງນີ້:

1. ວັດຖຸລະເບີດທາງການທະຫານ;
2. ວັດຖຸລະເບີດທາງອຸດສາຫະກຳ.

**ມາດຕາ 27 ວັດຖຸລະເບີດທາງການທະຫານ**

ວັດຖຸລະເບີດທາງການທະຫານ ແມ່ນ ວັດຖຸລະເບີດ ທີ່ນຳໃຊ້ເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 28 ວັດຖຸລະເບີດທາງອຸດສາຫະກຳ**

ວັດຖຸລະເບີດທາງອຸດສາຫະກຳ ແມ່ນ ວັດຖຸລະເບີດ ທີ່ນຳໃຊ້ເຂົ້າໃນການ ກໍ່ສ້າງໂຄງລ່າງພື້ນຖານ, ຂຸດຄົ້ນແຮ່ທາດ, ສະເຫຼີມສະຫຼອງ ແລະ ວຽກງານອື່ນ.

## ໝວດທີ 2
## ການຄຸ້ມຄອງວັດຖຸລະເບີດທາງການທະຫານ

**ມາດຕາ 29 ການຄຸ້ມຄອງວັດຖຸລະເບີດທາງການທະຫານໃນກຳລັງປ້ອງກັນຊາດ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງວັດຖຸລະເບີດ ໃນຂົງເຂດວຽກງານປ້ອງກັນຊາດ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ ກ່ຽວກັບການ ຄົ້ນຄວ້າ ປະດິດ, ຜະລິດ, ຈັດຊື້, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ນຳຜ່ານ, ປະກອບ, ນຳໃຊ້ ແລະ ທຳລາຍ ວັດຖຸລະເບີດ ທີ່ເສື່ອມຄຸນນະພາບ ຢ່າງເຂັ້ມງວດ.

**ມາດຕາ 30 ການຄຸ້ມຄອງວັດຖຸລະເບີດທາງການທະຫານ ໃນກຳລັງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງວັດຖຸລະເບີດ ໃນຂົງເຂດວຽກງານປ້ອງກັນຄວາມສະ ຫງົບ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ ກ່ຽວກັບການ ຈັດຊື້, ເກັບຮັກສາ, ນຳເຂົ້າ, ປະກອບ, ນຳໃຊ້ ແລະ ທຳລາຍ ວັດຖຸລະເບີດ ທີ່ເສື່ອມຄຸນນະພາບ ຢ່າງເຂັ້ມງວດ.

**ມາດຕາ 31 ການນຳໃຊ້ວັດຖຸລະເບີດທາງການທະຫານ**

ວັດຖຸລະເບີດທາງການທະຫານ ໃຫ້ນຳໃຊ້ເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປະຕິບັດໜ້າທີ່ ປົກປັກຮັກສາ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງ ນ່ານນ້ຳ ແລະ ນ່ານຟ້າ, ຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## ໝວດທີ 3
## ການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ

**ມາດຕາ 32 ການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ, ເກັບກຳບັນຊີ ແລະ ອະນຸຍາດ ກ່ຽວກັບການ ຜະລິດ, ເກັບຮັກສາ, ຂົນສົ່ງ ແລະ ເຄື່ອນຍ້າຍ, ຈຳໜ່າຍ ແລະ ຈັດຊື້, ນຳໃຊ້, ນຳເຂົ້າ, ສົ່ງອອກ, ນຳຜ່ານ ແລະ ທຳລາຍ ເພື່ອຮັບປະກັນຄວາມສະຫງົບ, ຄວາມເປັນລະ ບຽບຮຽບຮ້ອຍ ແລະ ຄວາມໝັ້ນຄົງຂອງຊາດ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ ຄວບຄຸມ, ຕິດຕາມ ກວດກາ ແລະ ເກັບກຳບັນຊີ ກ່ຽວກັບ ການນຳໃຊ້ວັດຖຸລະເບີດທາງອຸດສາຫະກຳ ຂອງ ນິຕິບຸກຄົນ ແລະ ການຈັດຕັ້ງ.

**ມາດຕາ 33 ການຜະລິດວັດຖຸລະເບີດທາງອຸດສາຫະກຳ**

ການຜະລິດວັດຖຸລະເບີດທາງອຸດສາຫະກຳ ຕ້ອງປະຕິບັດຕາມມາດຕະຖານເຕັກນິກ, ຄວາມປອດໄພ ຂອງການຜະລິດ ຕາມລະບຽບການຂອງກະຊວງປ້ອງກັນປະເທດ, ກົດໝາຍທີ່ກ່ຽວຂ້ອງ ແລະ ຮັບປະກັນຄຸນ ນະພາບຂອງຜະລິດຕະພັນ ໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້.

**ມາດຕາ 34 ການເກັບຮັກສາວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ ວັດຖຸລະ ເບີດທາງອຸດສາຫະກຳ ຕ້ອງເກັບຮັກສາໄວ້ໃນສາງທີ່ໄດ້ມາດຕະຖານຄວາມປອດໄພ, ຕັ້ງຢູ່ຫ່າງໄກຈາກຊຸມຊົນ ຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 35 ການຂົນສົ່ງ ແລະ ການເຄື່ອນຍ້າຍວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂົນສົ່ງ ແລະ ເຄື່ອນຍ້າຍວັດຖຸລະເບີດທາງອຸດສາຫະກຳ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ.

ການຂົນສົ່ງ ແລະ ເຄື່ອນຍ້າຍ ວັດຖຸລະເບີດທາງອຸດສາຫະກຳ ຕ້ອງຮັບປະກັນຄວາມປອດໄພ, ນຳໃຊ້ພາຫະນະສະເພາະ, ມີບຸກຄະລາກອນທີ່ຊຳນານງານ, ຂົນສົ່ງ ແລະ ເຄື່ອນຍ້າຍ ຕາມເສັ້ນທາງທີ່ກຳນົດ, ມີລົດເປີດທາງ, ຮັກສາໄລຍະຫ່າງ, ຄວາມໄວ, ຈອດຕາມສະຖານທີ່ກຳນົດ ແລະ ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 36 ການຈຳໜ່າຍ ແລະ ຈັດຊື້ ວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຈຳໜ່າຍ ແລະ ຈັດຊື້ ວັດຖຸລະເບີດທາງອຸດສາຫະກຳ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 37 ການນຳໃຊ້ວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ວັດຖຸລະເບີດທາງອຸດສາຫະກຳ ຕ້ອງຂໍອະນຸຍາດນຳກະຊວງປ້ອງກັນປະເທດ. ໃນເວລາມີການນຳໃຊ້ ຕ້ອງແຈ້ງໃຫ້ຊຸມຊົນ, ມີລະບົບເຕືອນໄພ, ມາດຕະການປ້ອງກັນຄວາມປອດໄພ ແລະ ປະຕິບັດຕາມລະບຽບການ ຂອງກະຊວງປ້ອງກັນປະເທດ.

ການນຳໃຊ້ວັດຖຸລະເບີດ ທີ່ເປັນດອກໄມ້ໄຟ ເພື່ອສະເຫຼີມສະຫຼອງ ວັນສຳຄັນຕ່າງໆຂອງຊາດ ໃຫ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ, ສຳລັບ ງານບຸນປະເພນີ ແລະ ງານເທດສະການຕ່າງໆ ໃຫ້ຂໍອະນຸຍາດນຳຂະແໜງການປ້ອງກັນຄວາມສະຫງົບ.

**ມາດຕາ 38 ການນຳເຂົ້າ, ສົ່ງອອກ ວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ນຳເຂົ້າ, ສົ່ງອອກ ວັດຖຸລະເບີດທາງອຸດສາຫະກຳ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 39 ການນຳວັດຖຸລະເບີດທາງອຸດສາຫະກຳ ຜ່ານ ສປປ ລາວ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ນຳວັດຖຸລະເບີດທາງອຸດສາຫະກຳ ຜ່ານ ສປປ ລາວ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມມາດຕາ 35 ຂອງກົດໝາຍສະບັບນີ້.

**ມາດຕາ 40 ການທຳລາຍວັດຖຸລະເບີດທາງອຸດສາຫະກຳ**

ວັດຖຸລະເບີດທາງອຸດສາຫະກຳ ທີ່ເສື່ອມຄຸນນະພາບ, ໝົດອາຍຸການນຳໃຊ້ ລວມທັງສິ່ງເສດເຫຼືອຂອງວັດຖຸລະເບີດດັ່ງກ່າວ ຕ້ອງໄດ້ຮັບການທຳລາຍ ຕາມລະບຽບການ.

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງທຳລາຍວັດຖຸລະເບີດທາງອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຕ້ອງຂໍອະນຸຍາດນຳກະຊວງປ້ອງກັນປະເທດ ແລະ ມີການຕິດຕາມ ກວດກາຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍໃນການທຳລາຍ.

# ພາກທີ IV
## ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ

**ມາດຕາ 41 ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ**

ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ແມ່ນ ການເຄື່ອນໄຫວ ຜະລິດ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ຈຳໜ່າຍ ແລະ ບໍລິການຊີເຈາະຈູດລະເບີດ.

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບການດຳເນີນທຸລະກິດ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດທາງການທະຫານ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງປ້ອງກັນປະເທດ.

**ມາດຕາ 42 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດການລົງທຶນ;
2. ບຸກຄະລາກອນ ທີ່ຊຳນານງານ ກ່ຽວກັບວັດຖຸລະເບີດ;
3. ຜູ້ຂໍລົງທຶນມີ ປະຫວັດຈະແຈ້ງ ແລະ ທຶນທີ່ເໝາະສົມ ກັບປະເພດທຸລະກິດ;
4. ແຜນປະກອບພາຫະນະ, ກົນຈັກ, ມີສະຖານທີ່ຕັ້ງ ທີ່ເໝາະສົມ;
5. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດທີ່ ກະຊວງປ້ອງກັນປະເທດກຳນົດ.

**ມາດຕາ 43 ການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຕ້ອງຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ ກະຊວງປ້ອງກັນປະເທດ ດັ່ງນີ້:

1. ສຳເນົາ ໃບທະບຽນວິສາຫະກິດ ແລະ ໃບທະບຽນລົງທຶນ;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ເອກະສານຢັ້ງຢືນກ່ຽວກັບຖານະການເງິນ;
4. ເອກະສານກ່ຽວກັບຂໍ້ມູນຄວາມປອດໄພຂອງວັດຖຸລະເບີດທາງອຸດສາຫະກຳ;
5. ແຜນປ້ອງກັນ ແລະ ແກ້ໄຂອຸບປະຕິເຫດ;
6. ເອກະສານອື່ນ ຕາມການກຳນົດຂອງກະຊວງປ້ອງກັນປະເທດ.

**ມາດຕາ 44 ການອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ພາຍຫຼັງໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບແລ້ວ ກະຊວງປ້ອງກັນປະເທດ ຕ້ອງພິຈາລະນາອະນຸຍາດດຳເນີນທຸລະກິດ ພາຍໃນເວລາ 45 ວັນ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ. ໃນກໍລະນີບໍ່ເຫັນດີ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນ ພາຍໃນເວລາດັ່ງກ່າວ.

**ມາດຕາ 45 ອາຍຸການຂອງໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ມີອາຍຸການບໍ່ໃຫ້ເກີນ ສາມປີ ຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້.

**ມາດຕາ 46 ການໂຈະການດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ການດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດບໍ່ຖືກຕ້ອງຕາມ ຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
2. ສ້າງຄວາມເສຍຫາຍຕໍ່ ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
3. ບໍ່ປະຕິບັດພັນທະທາງດ້ານການເງິນ;
4. ບໍ່ປະຕິບັດຕາມແຜນການປ້ອງກັນ ແລະ ແກ້ໄຂອຸປະຕິເຫດ;
5. ມີການລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 47 ການຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປັບປຸງແກ້ໄຂ ຕາມສາເຫດທີ່ມີການໂຈະ ພາຍຫຼັງທີ່ໄດ້ມີການແຈ້ງເຕືອນແລ້ວ;
2. ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຢ່າງຮ້າຍແຮງ.

**ມາດຕາ 48 ສິດຂອງຜູ້ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ມີສິດ ດັ່ງນີ້:

1. ເຄື່ອນໄຫວຕາມການອະນຸຍາດໃຫ້ດຳເນີນທຸລະກິດ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ສະເໜີໂຈະ ຫຼື ຢຸດເຊົາການດຳເນີນທຸລະກິດຂອງຕົນ;
4. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ;
5. ຮ້ອງທຸກກ່ຽວກັບການລະເມີດສິດຂອງຕົນ ໃນການດຳເນີນທຸລະກິດ;
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ພັນທະຂອງຜູ້ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳຢ່າງເຂັ້ມງວດ;
2. ເສຍ ພາສີ, ອາກອນ ແລະ ປະຕິບັດພັນທະອື່ນ ໃຫ້ແກ່ລັດຕາມກົດໝາຍ ແລະ ລະບຽບການ;
3. ສ້າງຕັ້ງໜ່ວຍງານຄຸ້ມຄອງວຽກງານ ວັດຖຸລະເບີດທາງອຸດສາຫະກຳ;
4. ຝຶກອົບຮົມຄວາມຮູ້ດ້ານຄວາມປອດໄພ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ໃຫ້ພະນັກງານ ແລະ ກຳມະກອນໃນຫົວໜ່ວຍທຸລະກິດຂອງຕົນ;
5. ສ້າງແຜນການນຳໃຊ້ວັດຖຸລະເບີດທາງອຸດສາຫະກຳປະຈຳປີ;
6. ສ້າງ ແລະ ພັດທະນາແຜນປ້ອງກັນ ແລະ ມາດຕະການແກ້ໄຂອຸບປະຕິເຫດ;
7. ເກັບຮັກສາ ແລະ ສ້າງຖານຂໍ້ມູນ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ;

8. ສະໜອງຂໍ້ມູນ ແລະ ຄໍາແນະນໍາດ້ານຄວາມປອດໄພ ກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ;

9. ທໍາລາຍວັດຖຸລະເບີດທາງອຸດສາຫະກໍາ ທີ່ເສື່ອມຄຸນນະພາບ ໝົດອາຍຸການນໍາໃຊ້ ແລະ ສິ່ງເສດເຫຼືອຂອງວັດຖຸລະເບີດດັ່ງກ່າວ;

10. ຮຽກຄືນ ຜະລິດຕະພັນວັດຖຸລະເບີດທາງອຸດສາຫະກໍາ ທີ່ບໍ່ໄດ້ມາດຕະຖານ;

11. ເກັບກູ້ ແລະ ສົ່ງຄືນ ວັດຖຸລະເບີດ ທີ່ເຫຼືອໃຊ້ຢູ່ໃນໂຄງການ;

12. ຮັບຜິດຊອບຕໍ່ຜົນເສຍຫາຍ ແລະ ຄ່າໃຊ້ຈ່າຍທັງໝົດທີ່ເກີດຈາກການດໍາເນີນທຸລະກິດຂອງຕົນ;

13. ອໍານວຍຄວາມສະດວກແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່;

14. ສະຫຼຸບ ແລະ ລາຍງານການດໍາເນີນທຸລະກິດຂອງຕົນ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

15. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 50 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ຊື້ ຂາຍ, ແລກປ່ຽນ, ນໍາເຂົ້າ-ສົ່ງອອກ, ຊຸກເຊື່ອງ, ຄອບຄອງ, ນໍາໃຊ້, ທໍາລາຍ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນໍາໃຊ້ ອາວຸດ ແລະ ວັດຖຸລະເບີດ ເຂົ້າໃນການລ່າ ສັດປ່າ, ສັດນໍ້າ ແລະ ອື່ນໆ;

3. ນໍາໃຊ້ອາວຸດພື້ນເມືອງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

4. ດໍາເນີນທຸລະກິດ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ນໍາເຂົ້າ, ນໍາໃຊ້ ຫຼື ມີໄວ້ຄອບຄອງ ວັດຖຸລະເບີດ, ອາວຸດເຄມີ, ຊີວະພາບ ແລະ ນິວເຄຼຍ;

6. ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ນໍາໃຊ້ ດອກໄມ້ໄຟ ໂດຍບໍ່ໄດ້ຮັບອະນຸຍາດ;

7. ປະກົດ, ດັດແປງສະພາບເຕັກນິກ, ຮູບຮ່າງ, ສີ ແລະ ໂຄງປະກອບຂອງ ອາວຸດ ທຸກຊະນິດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;

8. ສ້າງອຸປະສັກ ຫຼື ຂັດຂວາງ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

9. ປອມແປງ ແລະ ທໍາລາຍ ເອກະສານ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

10. ຖືອາວຸດທຸກປະເພດ ເຂົ້າໄປໃນສະຖານທີ່ສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ;

11. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງ;

12. ລັກລອບ ນໍາເຂົ້າ, ຊື້ ຂາຍ ຊິ້ນສ່ວນຕ່າງໆ ທີ່ສາມາດນໍາມາປະກົດເປັນ ອາວຸດ ແລະ ວັດຖຸລະເບີດ;

13. ຊື້ ຂາຍ, ນໍາເຂົ້າ-ສົ່ງອອກ, ຄອບຄອງ, ເຄື່ອງມືຊ່ວຍໜູນ ໂດຍບໍ່ໄດ້ຮັບອະນຸຍາດ;

14. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 51 ຂໍ້ຫ້າມ ສໍາລັບຜູ້ດໍາເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ**

ຫ້າມ ຜູ້ດໍາເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ໄດ້ຮັບອະນຸຍາດ;

2. ດໍາເນີນການຜະລິດ, ນໍາເຂົ້າ, ສົ່ງອອກ, ຂົນສົ່ງ, ຈໍາໜ່າຍ ແລະ ນໍາໃຊ້ ວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ຖືກຕ້ອງຕາມຈຸດປະສົງ ທີ່ໄດ້ຮັບອະນຸຍາດ;

3. ດໍາເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ທີ່ສ້າງຜົນກະທົບ ຕໍ່ ຊີວິດ, ສຸຂະພາບ ຂອງ ຄົນ, ສັດ, ພືດ, ຊັບສິນ ແລະ ສິ່ງແວດລ້ອມ;

4. ສວຍໃຊ້ການດໍາເນີນທຸລະກິດ ເພື່ອເຄື່ອນໄຫວກໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ;

5. ຂົນສົ່ງ ແລະ ເຄື່ອນຍ້າຍ ວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ຢຸດຈອດຕາມຈຸດທີ່ບໍ່ໄດ້ອະນຸຍາດ;

6. ຖິ້ມ ຫຼື ທໍາລາຍ ສິ່ງເສດເຫຼືອຂອງ ວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ໄດ້ຮັບອະນຸຍາດ;

7. ເອົາໃບອະນຸຍາດ ໄປຄໍ້າປະກັນ ຫຼື ປະກອບເປັນຮຸ້ນ, ໃຫ້ຜູ້ອື່ນ ຢືມ ຫຼື ເຊົ່າ, ໂອນ ຫຼື ຂາຍ ໃຫ້ຜູ້ອື່ນ;

8. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ຮັບຜິດຊອບວຽກງານຄຸ້ມຄອງວັດຖຸລະເບີດທາງອຸດສາຫະກໍາ;

9. ໃຊ້ຄວາມຮຸນແຮງ ຫຼື ສວຍໃຊ້ໜ້າທີ່, ຕໍາແໜ່ງ ຂອງຜູ້ມີສິດໃນການຄຸ້ມຄອງ ວັດຖຸລະເບີດທາງອຸດສາຫະກໍາ ເພື່ອນາບຂູ່ເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ;

10. ປອມແປງ ແລະ ທໍາລາຍເອກະສານ ກ່ຽວກັບວຽກງານຄຸ້ມຄອງ ວັດຖຸລະເບີດທາງອຸດສາຫະກໍາ;

11. ປົກປິດ, ເຊື່ອງອໍາ ຫຼື ແຈ້ງຂໍ້ມູນ ກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ຕໍ່ເຈົ້າໜ້າທີ່ໂດຍບໍ່ຖືກຕ້ອງ;

12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 52 ຂໍ້ຫ້າມ ສໍາລັບເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ໃຫ້ພັກພວກຂອງຕົນ;

2. ທວງເອົາ, ຂໍເອົາ, ຮັບເອົາ ສິນບົນ ຫຼື ຫາຜົນປະໂຫຍດອື່ນ ໂດຍບໍ່ຖືກຕ້ອງ;

3. ກົດໜ່ວງ, ຖ່ວງດຶງ ແລະ ແກ່ຍາວເວລາໃນການພິຈາລະນາເອກະສານ ກ່ຽວກັບການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

4. ຊື້ ຂາຍ, ປະກອບ ແລະ ນໍາໃຊ້ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ປອມແປງ ແລະ ທໍາລາຍ ເອກະສານ ກ່ຽວກັບການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

6. ປົກປິດ, ເຊື່ອງອໍາ, ບໍ່ແຈ້ງ ຫຼື ແຈ້ງ ບັນຊີ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ຖືກຕ້ອງ;

7. ປະລະໜ້າທີ່ ແລະ/ຫຼື ເມີນເສີຍຕໍ່ເຫດສຸກເສີນ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ທີ່ເກີດຂຶ້ນ;

8. ເປີດເຜີຍຄວາມລັບ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

9. ອອກໃບອະນຸຍາດນໍາໃຊ້ອາວຸດເສິກ ໃຫ້ຜູ້ບໍ່ແມ່ນເປົ້າໝາຍ ໄດ້ຮັບອະນຸຍາດປະກອບອາວຸດເສິກ;

10. ເອົາຊິ້ນສ່ວນຂອງອາວຸດ ແລະ ວັດຖຸລະເບີດ ໄປແລກປ່ຽນ, ຊື້ ຂາຍ ແລະ ຍຸບ ຫຼື ທໍາລາຍ ໂດຍບໍ່ໄດ້ຮັບອະນຸຍາດ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 53 ຂໍ້ຫ້າມ ສຳລັບຜູ້ໄດ້ຮັບອະນຸຍາດປະກອບອາວຸດ**

ຫ້າມ ຜູ້ໄດ້ຮັບອະນຸຍາດປະກອບອາວຸດ ມີພຶດຕິກຳ ດັ່ງນີ້:

1. ເອົາອາວຸດ ໃຫ້ບຸກຄົນໃນຄອບຄົວ ຫຼື ບຸກຄົນອື່ນ ຢືມ, ນຳໃຊ້, ມອບ-ໂອນ, ແລກປ່ຽນ, ຊື້ ຂາຍ, ຈຳນຳ ແລະ ຈຳນອງ;
2. ນຳໃຊ້ອາວຸດ ບັງຄັບ ແລະ ນາບຂູ່ ບຸກຄົນອື່ນ;
3. ນຳໃຊ້ອາວຸດກໍ່ ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ;
4. ພົກພາ ຫຼື ຖື ອາວຸດ ທຸກປະເພດ ເຂົ້າໄປໃນສະຖານທີ່ສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ;
5. ດັດແປງສະພາບເຕັກນິກ, ຮູບຮ່າງ, ສີ ແລະ ໂຄງປະກອບ ອາວຸດ;
6. ເອົາຊິ້ນສ່ວນຂອງອາວຸດ ໄປແລກປ່ຽນ, ຊື້ ຂາຍ, ຍຸບ ຫຼື ທຳລາຍ ໂດຍບໍ່ໄດ້ຮັບອະນຸຍາດ;
7. ນຳເອົາອາວຸດປືນກິລາ ໄປນຳໃຊ້ນອກສະຖານທີ່ຝຶກຊ້ອມ ຫຼື ສະຖານທີ່ແຂ່ງຂັນ;
8. ປະອາວຸດ ໃນເວລາປະຕິບັດໜ້າທີ່ ຫຼື ເວລາສູ້ຮົບ;
9. ປອມແປງເອກະສານ ອະນຸຍາດນຳໃຊ້ອາວຸດ;
10. ນຳໃຊ້ອາວຸດເສິກ ເຂົ້າໃນການລ່າ ສັດປ່າ, ສັດນ້ຳ ແລະ ອື່ນໆ;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VI
# ການຄຸ້ມຄອງ ແລະ ການກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

**ມາດຕາ 54 ອົງການຄຸ້ມຄອງວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

4. ປ້ອງກັນ, ສະກັດກັ້ນ ແລະ ຕ້ານ ການກໍ່ອາຊະຍາກຳ ແລະ ການ ຊື້ ຂາຍ ອາວຸດ ແລະ ວັດຖຸລະເບີດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ທຸກຮູບແບບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ອະນຸຍາດ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ;

6. ອະນຸຍາດນຳໃຊ້ດອກໄມ້ໄຟ ເຂົ້າໃນການ ສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ;

7. ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃນທົ່ວກຳລັງປ້ອງກັນຊາດ;

8. ຊີ້ນຳ ການປະກອບ ແລະ ການນຳໃຊ້ ອາວຸດ ໃນທົ່ວກຳລັງປ້ອງກັນຊາດ;

9. ເກັບກຳ, ທ້ອນໂຮມ, ສັງລວມ, ຂຶ້ນບັນຊີ ກ່ຽວກັບອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ ໃນທົ່ວກຳລັງປ້ອງກັນຊາດ ລວມທັງ ວັດຖຸລະເບີດທາງອຸດສາຫະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

10. ດຳເນີນການສືບສວນ-ສອບສວນ ແລະ ດຳເນີນຄະດີ ຕາມກົດໝາຍ ຕໍ່ກຳລັງປ້ອງກັນຊາດ ທີ່ນຳໃຊ້ອາວຸດ ແລະ ວັດຖຸລະເບີດ ທີ່ເປັນການລະເມີດກົດໝາຍ ໂດຍສະເພາະການກະທຳຜິດທາງການທະຫານ ຊຶ່ງແຕະຕ້ອງເຖິງ ຄວາມສະຫງົບທາງດ້ານການເມືອງ ແລະ ຄວາມໝັ້ນຄົງຂອງຊາດ;

11. ນຳໃຊ້ມາດຕະການສະກັດກັ້ນ ແລະ ດຳເນີນການສືບສວນ-ສອບສວນເບື້ອງຕົ້ນ ກ່ຽວກັບການນຳໃຊ້ ອາວຸດ ແລະ ວັດຖຸລະເບີດ ຂອງບຸກຄົນອື່ນ ທີ່ລະເມີດກົດໝາຍ ຫຼື ສົ່ງຜົນກະທົບ ຕໍ່ ຊີວິດ ແລະ ຊັບສິນຂອງພົນລະເມືອງ ເພື່ອສົ່ງໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ດຳເນີນຄະດີຕາມກົດໝາຍ;

12. ຄຸ້ມຄອງ, ຕິດຕາມ ກວດກາ ບັນດາຫົວໜ່ວຍທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ;

13. ຝຶກອົບຮົມ, ບຳລຸງ, ຍົກລະດັບ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

14. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

16. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຕໍ່ລັດຖະບານ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

4. ປ້ອງກັນ, ສະກັດກັ້ນ ແລະ ຕ້ານການກໍ່ອາຊະຍາກຳ ແລະ ການຊື້ ຂາຍ ອາວຸດ ແລະ ວັດຖຸລະເບີດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ທຸກຮູບແບບ ໃນສັງຄົມ;

5. ຄວບຄຸມ, ຕິດຕາມ ກວດກາ ການຜະລິດ, ນໍາເຂົ້າ, ສົ່ງອອກ, ຂົນສົ່ງ, ຈໍາໜ່າຍ ແລະ ນໍາໃຊ້ ອາວຸດ ແລະ ວັດຖຸລະເບີດ ພ້ອມທັງນໍາໃຊ້ມາດຕະການແກ້ໄຂຕາມ ກົດໝາຍ ແລະ ລະບຽບການ ໃນກໍລະນີມີການລະເມີດ;

6. ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃນກໍາລັງປ້ອງກັນຄວາມສະຫງົບ ແລະ ສັງຄົມ;

7. ຊີ້ນໍາການປະກອບ ແລະ ການນໍາໃຊ້ ອາວຸດ ໃນກໍາລັງປ້ອງກັນຄວາມສະຫງົບ;

8. ເກັບກໍາ, ສັງລວມ, ຂຶ້ນບັນຊີ ກ່ຽວກັບ ອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເພື່ອເກັບກູ້ ແລະ ທ້ອນໂຮມ;

9. ນໍາໃຊ້ມາດຕະການສະກັດກັ້ນ ແລະ ດໍາເນີນການສືບສວນ-ສອບສວນ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ທີ່ລະເມີດກົດໝາຍ ຫຼື ສົ່ງຜົນກະທົບ ຕໍ່ ຊີວິດ, ສຸຂະພາບ, ຊັບສິນ ຂອງພົນລະເມືອງ ແລະ ສິ່ງແວດລ້ອມ;

10. ຂຶ້ນທະບຽນ, ອອກ ແລະ ຖອນ ໃບອະນຸຍາດນໍາໃຊ້ ອາວຸດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ທວງໃຫ້ຜູ້ດໍາເນີນທຸລະກິດ ສະໜອງຂໍ້ມູນ ກ່ຽວກັບວັດຖຸລະເບີດ ເພື່ອຂຶ້ນບັນຊີ, ຄຸ້ມຄອງ ແລະ ຕິດຕາມ ກວດກາ;

12. ອະນຸຍາດນໍາໃຊ້ ດອກໄມ້ໄຟ ເຂົ້າໃນການສະເຫຼີມສະຫຼອງ ງານບຸນປະເພນີ ແລະ ງານເທດສະການຕ່າງໆ ພ້ອມທັງ ຕິດຕາມ ກວດກາ ການຈໍາໜ່າຍ ແລະ ນໍາໃຊ້ ດອກໄມ້ໄຟ ໃນສັງຄົມ;

13. ຝຶກອົບຮົມ, ຍົກລະດັບ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

14. ປະສານສົມທົບກັບ ກະຊວງປ້ອງກັນປະເທດ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຕໍ່ລັດຖະບານ;

17. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃນການປະສານສົມທົບ ແລະ ໃຫ້ການຮ່ວມມືກັບກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

**ມາດຕາ 58 ອົງການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ອົງການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 59 ເນື້ອໃນການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

2. ການປະຕິບັດ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ;

3. ການເຄື່ອນໄຫວຂອງຜູ້ດຳເນີນທຸລະກິດ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ;

4. ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

5. ເນື້ອໃນອື່ນ ເມື່ອເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 60 ຮູບການ ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

# ພາກທີ VII
# ງົບປະມານ

**ມາດຕາ 61 ງົບປະມານ**

ງົບປະມານຮັບໃຊ້ ໃນການເຄື່ອນໄຫວວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໄດ້ມາຈາກ ງົບປະມານແຫ່ງລັດ, ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕາ 62 ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ

ອົງການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງກົດໝາຍສະບັບນີ້ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ງົບປະມານດັ່ງກ່າວ ດ້ວຍການຂຶ້ນແຜນງົບປະມານກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ເພື່ອສະເໜີຂັ້ນເທິງພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 63 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບ ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 64 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ສັງຄົມ, ຊີວິດ, ສຸຂະພາບ, ຊັບສິນຂອງຜູ້ອື່ນ, ແຕະຕ້ອງເຖິງຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ດຳເນີນຄະດີຕາມກົດໝາຍ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

ມາດຕາ 65 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ເນື່ອງຈາກມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຖິ້ມ ຫຼື ທຳລາຍ ສິ່ງເສດເຫຼືອຂອງວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ເຄື່ອນຍ້າຍ, ຂົນສົ່ງ, ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຈອດຍານພາຫະນະທີ່ຂົນສົ່ງວັດຖຸລະເບີດ ບໍ່ຖືກຕາມຈຸດທີ່ກຳນົດ;
4. ນຳໃຊ້ຍານພາຫະນະທີ່ບໍ່ຮັບປະກັນມາດຕະຖານຄວາມປອດໄພ ໃນເວລາ ຂົນສົ່ງ ແລະ ເຄື່ອນຍ້າຍວັດຖຸລະເບີດ;
5. ມີໄວ້ໃນຄອບຄອງເຄື່ອງມືຊ່ວຍໜູນໂດຍບໍ່ໄດ້ຮັບອະນຸຍາດ;
6. ເອົາໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດ ໄປຄ້ຳປະກັນ ຫຼື ປະກອບເປັນຮຸ້ນ, ໃຫ້ຜູ້ອື່ນ ຢືມ ຫຼື ເຊົ່າ, ໂອນ ຫຼື ຂາຍ ໃຫ້ຜູ້ອື່ນ;
7. ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດ ບໍ່ຖືກຕ້ອງຕາມຈຸດປະສົງ ທີ່ໄດ້ຮັບອະນຸຍາດ;
8. ຜະລິດ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ຈຳໜ່າຍ ແລະ ນຳໃຊ້ ດອກໄມ້ໄຟ ໂດຍບໍ່ໄດ້ຮັບອະນຸຍາດ.

ສຳລັບ ອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 66 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 67 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 5 ຕຸລາ 2022 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ